# ຄະນະທີ່ປຶກສາດ້ານການຄຸ້ມຄອງ ການປະມົງ (TAB) ໃນອ່າງແມ່ນ້ຳຂອງ

# ບົດບາດແມ່ຍິງໃນວຽກງານການປະມົງ ຢູ່ອ່າງແມ່ນ້ຳຂອງຕອນລຸ່ມ

*ບົດສະເໜີແນະວິທີການຄຸ້ມຄອງການປະມົງ No. 4*
*ສິງຫາ 2006*



ເພື່ອການຄຸ້ມຄອງການປະມົງໃນອ່າງແມ່ນ້ຳຂອງຢ່າງມີປະສິດທິຜົນ ແລະ ຍືນຍົງ.

## ຄວາມເປັນມາ

ຄວາມສະເໝີພາບ, ເທົ່າທຽມກັນ ແລະ ການພັດທະນາແບບຍືນຍົງໃນຂະແໜງການປະມົງແມ່ນຕ້ອງພິຈາລະນາ ແລະ ກວມລວມເອົາໝົດທຸກຊັ້ນຄົນຢູ່ໃນສັງຄົມ. ແຕ່ວ່າບົດບາດຂອງແມ່ຍິງຢູ່ໃນວຽກງານການປະມົງ ແມ່ນບໍ່ໄດ້ຮັບການຍອມຮັບ ຫລື ຮັບຮອງເອົາມາຕັ້ງແຕ່ດົນນານແລ້ວ, ສຽງຂອງເຂົາເຈົ້າແມ່ນມີໜ້ອຍຢູ່ໃນຂັ້ນນຳ ຫລື ຂັ້ນວາງນະໂຍບາຍຕ່າງໆ[1]. ການບໍ່ຖືກຮັບຮູ້ ຫລື ບໍ່ມີຕົວແທນຢູ່ໃນວົງການແຕ່ລະຂັ້ນແມ່ນເຮັດໃຫ້ເພດຍິງ ບໍ່ມີສິດສະເໝີພາບເທົ່າກັບເພດຊາຍ ແລະ ກໍ່ໃຫ້ເກີດຄວາມບໍ່ເຂົ້າໃຈຕໍ່ຮູບພາບລວມຂອງຂະແໜງການປະມົງວ່າ ດຳເນີນໄປແນວໃດ ແລະ ມີຫນ້າທີ່ຫຍັງ. ຕາມການສຶກສາຫວ່າງບໍ່ດົນມານີ້ໃຫ້ຮູ້ວ່າແມ່ຍິງແມ່ນປະກອບສ່ວນຢ່າງສຳຄັນຕໍ່ວຽກງານການປະມົງ, ການປະກອບສ່ວນຂອງເຂົາເຈົ້າແມ່ນມີຄວາມສຳຄັນຫລາຍ ແລະ ໃນບາງກິດຈະກຳ ການປະກອບສ່ວນຂອງເພດຍິງ ແມ່ນກວມເອົາຫລາຍກວ່າການປະກອບສ່ວນຂອງເພດຊາຍ[2]. ດ້ວຍເຫດນັ້ນ, ການວາງແຜນພັດທະນາການປະມົງຢູ່ອ່າງແມ່ນ້ຳຂອງແມ່ນຕ້ອງໄດ້ລວມເອົາເພດຍິງເຂົ້ານຳ ແລະ ກໍ່ບໍ່ຄວນມອງຂ້າມບັນດາໜ້າວຽກທີ່ສ່ວນຫລາຍແມ່ນເພດຍິງເປັນຜູ້ຈັດຕັ້ງປະຕິບັດ.

ການສ້າງແຜນການເພື່ອແກ້ໄຂບັນຫາຄວາມບໍ່ເທົ່າທຽມກັນແມ່ນຮຽກຮ້ອງໃຫ້ມີ ຄວາມເຂົ້າໃຈວ່າ ເປັນຫຍັງບັນຫາກ່ຽວກັບບົດບາດແມ່ຍິງຈິ່ງຖືກມອງຂ້າມ, ເປັນຫຍັງບັນ ຫາບົດບາດຍິງຊາຍຈຶ່ງມີຄວາມສຳຄັນ ແລະ ຕະຫລອດຮອດຫນ້າທີ່, ຊັ້ນຕຳແຫນ່ງຂອງແມ່ຍິງ ບໍ່ສະເພາະຢູ່ໃນຊຸມຊົນຊາວປະມົງຂັ້ນທ້ອງຖິ່ນ ແຕ່ໃນລະດັບຂັ້ນຄູ້ມຄອງ ແລະ  ບໍລິຫານ ການປະມົງໃນລະດັບປະເທດ.

ໃນປີ 2005 ຄະນະທີ່ປຶກສາດ້ານການຄຸ້ມຄອງການປະມົງ (TAB) ເຫັນໄດ້ເຖິງ ຄວາມຈຳເປັນຕ້ອງມີຂໍ້ມູນດັ່ງກ່າວ ແລະ ເຫັນດີໃຫ້ມີການສຶກສາບົດບາດແມ່ຍິງຕໍ່ວຽກງານ ການປະມົງຢູ່ແມ່ນ້ຳຂອງຕອນລຸ່ມ. ຊຶ່ງແມ່ນເຄື່ອຄ່າຍສົ່ງເສີມບົດບາດຍິ່ງຊາຍຢູ່ໃນແມ່ນ້ຳ ຂອງຕອນລຸ່ມ (NGF)[3] ເປັນຜູ້ຄົ້ນຄວ້າ. ວຽກງານດັ່ງກ່າວ ແມ່ນລວມທັງການທົບທວນເອກະສານ, ລົງເກັບກຳຂໍ້ມູນ ແລະ ເປີດກອງປະຊຸມຕ່າງໆ. ບົດສະເໜີແນະວິທີການຄຸ້ມຄອງການປະມົງບົດນີ້ ແມ່ນຈະໄດ້ສະເຫນີຜົນຂອງການຄົ້ນຄວ້າດັ່ງກ່າວ.

## ເປັນຫັຍງໃນອະດີດ ບັນຫາບົດບາດຂອງແມ່ຍິງຈິ່ງຖືກມອງຂ້າມ?

ມັນມີຫລາຍເຫດຜົນທີ່ວ່າບົດບາດແມ່ຍິງຖືກມອງຂ້າມ, ບາງເຫດຜົນແມ່ນຍ້ອນວ່າຄວາມເຂົ້າໃຈຕໍ່ວຽກງານການປະມົງ ສ່ວນຫລາຍມັກຈະເຂົ້າໃຈວ່າ ແມ່ນວຽກທີ່ພົວພັນໂດຍກົງກັບ ການຫາປາຢ່າງດຽວ, ບົດບາດຜູ້ຍິງຖືກມອງຂ້າມ ຈາກຄວາມເຂົ້າໃຈຜິດຂອງຄົນບາງກຸ່ມ ແລະ ອີກເຫດຜົນນຶ່ງຍ້ອນວ່າ ຈຳນວນແມ່ຍິງທີ່ສັງກັດຢູ່ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງຂັ້ນສູງແມ່ນມີໜ້ອຍ.

1. ໃນໄລຍະຜ່ານມາ, ການຄົ້ນຄວ້າກ່ຽວກັບວຽກງານການປະມົງ ແມ່ນສຸມໃສ່ການພັດທະນາດ້ານເຕັກໂນໂລຊີເພື່ອຍົກສະມັດຕະພາບຜົນຜະລິດປາໃນທຳມະຊາດ ແລະ ການລ້ຽງປາ ໃນໜອງໃຫ້ແກ່ຊາວກະສິກອນຢູ່ຊົນນະບົດ ສ່ວນ ວຽກງານພັດທະນາ ວັດທະນະທຳຕ່າງໆ ແມ່ນໄດ້ຮັບຜົນປະໂຫຍດຫລາຍຈາກການຄົ້ນຄວ້າໜ້ອຍ.

2. ມີພຽງນັກຄົ້ນຄວ້າດ້ານທຳມະຊາດບາງຄົນ ທີ່ທຳການຄົ້ນຄວ້າລົງເລິກໃນລະດັບຄອບຄົວ ເພື່ອສຶກສາດ້ານການຫາປາໃນລະດັບຄອບຄົວໂດຍພາບລວມ ຊຶ່ງຈະບໍ່ລົງເລິກໜ້າທີ່ລະອຽດ ເຖິງແຕ່ລະບຸກຄົນຢູ່ໃນຄອບຄົວດັ່ງກ່າວ.

3. ມີຄວາມເຂົ້າໃຈຂອງບາງກຸ່ມທີ່ຄິດວ່າ ເພດຍິງເປັນເພດອ່ອນແອ ແລະ ບໍ່ເໝາະສຳລັບ ການປະມົງທີ່ຕ້ອງໃຊ້ແຮງງານໜັກເຂົ້າໃນການຫາປາ.

4. ບາງຄຳຄິດເຫັນຂອງຄົນກຸ່ມນ້ອຍຍັງຄິດວ່າ ເພດຍິງແມ່ນບໍ່ມີຄວາມຮູ້, ຄວາມຊຳນານ ທາງດ້ານເຕັກນິກ. ສະນັ້ນ, ຈຶ່ງບໍ່ເໝາະສຳລັບຮຽນຮູ້ ເອົາເຕັກນິກໃຫມ່ (ຄວາມເຂົ້າໃຈ ດັ່ງກ່າວ ແມ່ນຜິດກັບຄວາມຈິງ, ຍົກຕົວຢ່າງ: ຢູ່ປະເທດໄທ, ນັກຮຽນທີ່ຮຽນກ່ຽວກັບຂະແໜງການປະມົງມີສະຖິຕິເພີ່ມຂຶ້ນ - ໃນມະວິທະຍາໄລ ກະເສດສາດ ປະເທດໄທ ນັກຮຽນເພດຍິງ ແມ່ນກວມເອົາສ່ວນໃຫຍ່ຂອງຈຳນວນນັກສຶກສາ ທີ່ຮຽນກ່ຽວກັບ ຊີວະວິທະຍາ ແລະ ເຕັກໂນໂລຊີ ກ່ຽວກັບການປະມົງ[5])

5. ເພດຍິງຍັງມີເປີເຊັນໜ້ອຍໃນຂັ້ນກົມປະມົງຢູ່ໃນທຸກໆລະດັບ, ລວມທັງລະດັບການນຳ ທີ່ມີໜ້າທີ່ຕັດສິນບັນຫາ[6].

## ເປັນຫຍັງບັນຫາບົດບາດຂອງແມ່ຍິງຕໍ່ການປະມົງຈຶ່ງມີຄວາມສຳຄັນ?

ນອກຈາກບັນດາຂໍ້ຄົງຄ້າງທີ່ໄດ້ກ່າວມາຂ້າເທິງກ່ຽວກັບຄວາມເປັນເອກະພາບ, ສະເໝີພາບລະຫວ່າງຍິງຊາຍ, ມັນຍັງມີຫລາຍເຫດຜົນທີ່ຢັ້ງຢືນວ່າ ເປັນຫຍັງຈຶ່ງຕ້ອງໄດ້ພິຈາລະນາ ເອົາບົດບາດເພດຍິງ ເຂົ້າຢູ່ໃນແຜນພັດທະນາການປະມົງໃຫ້ມີປະສິດທິພາບ ແລະ ປະສິດ ທິຜົນສູງ.

1. ເພດຍິງແມ່ນໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນກິດຈະກຳປະມົງທີ່ບໍ່ແມ່ນການຫາປາ ໂດຍກົງ. ພວກເຂົາ ເປັນແຮງງານທີ່ສຳຄັນເຂົ້າໃນວຽກ ງານປຸງແຕ່ງຜະລິດ ຕະພັນປາ ແລະ ການຕະຫລາດປາ. ເຖິງແມ່ນ ວ່າຫນ້າວຽກດັ່ງກ່າວຈະແຕກຕ່າງກັບໜ້າວຽກທີ່ເພດຊາຍ ຮັບຜິດຊອບ, ແຕ່ເຂົາເຈົ້າກໍ່ເປັນສ່ວນ ນຶ່ງຂອງອຸດສະຫະກຳການປະມົງ ຖ້າວ່າມອງຂ້າມ ການປະກອບສ່ວນຂອງເພດຍິງກໍ່ໝາຍຄວາມວ່າພວກເຮົາບໍ່ເຫັນຄວາມສຳຄັນ ແລະ ມອງຂ້າມບັນດາກິດຈະກຳໃຫຍ່ທີ່ແມ່ຍິງໄດ້ປະກອບສ່ວນເຂົ້າໃນຂົງເຂດ ດັ່ງກ່າວ.

2. ໜ້າວຽກຕ່າງໆທີ່ເພດຍິງປະຕິບັດແມ່ນໃຫ້ບົດຮຽນຫລາຍອັນທີ່ແຕກຕ່າງກັນ, ຍົກຕົວຢ່າງ: ຜູ້ຊາຍແມ່ນມີຄວາມຊຳນານໃນການຊອກຫາບ່ອນໃດທີ່ມີປາຫລາຍ, ສຳລັບເພດຍິງກໍ່ຈະຮູ້ເຖິງລາຄາຂອງປາແຕ່ລະຊະນິດທີ່ຕະຫລາດຕ້ອງການ. ຄວາມຮູ້ດັ່ງກ່າວ ສ່ວນຫລາຍແມ່ນປະສົມປະສານກັນ - ຕົວຢ່າງນີ້ໄດ້ຊີ້ໃຫ້ເຫັນເຖິງຄວາມຮູ້ ໃນການຫາປາ ທີ່ຕະຫລາດຕ້ອງການ ແລະ ປາທີ່ມີລາຄາແພງ. ມີແຕ່ຄວາມຮູ້ ແລະ ຄວາມເຂົ້າໃຈຂອງທັງສອງເພດ ຍິງ ແລະ ຊາຍ ເທົ່ານັ້ນທີ່ສາມາດເຂົ້າໃຈທັງໝົດລະບົບຂອງການປະມົງ ແລະ ສາມາດຄຸ້ມຄອງ ແລະ ພັດທະນາໄປໃນທາງທີ່ຖືກຕ້ອງໄດ້.

3. ການຂາດຕົວແທນເພດຍິງຢູ່ໃນລະດັບສູງ ຫລື ລະດັບຕັດສິນບັນຫາໃນລະດັບ ລັດຖະບານ[6] ແລະ ຊຸມຊົນ[7] ແມ່ນເຮັດໃຫ້ເພດຍິງເຫີນຫ່າງ ຫລື ບໍ່ໄດ້ມີການນຳໃຊ້ ຄວາມຮູ້ຄວາມສາມາດທີ່ເຂົາເຈົ້າມີ.

4. ການເພີ້ມຂື້ນຂອງຈຳນວນເພດຊາຍທີ່ຍ້າຍຈາກການປະມົງ ໄປເຮັດວຽກອື່ນຫມາຍເຖິງ ເພດຍິງຕ້ອງໄດ້ໄປປ່ຽນແທນຫນ້າວຽກດັ່ງກ່າວ.

**ບາງຂໍ້ແນະນຳ**:

ການທີ່ຍອມຮັບ ແລະ ເຫັນຄຸນຄ່າຂອງເພດຍິງຢູ່ໃນຂະແຫນງການປະມົງ ແລະ ການໃຫ້ອຳນາດແກ່ພວກເຂົາຢູ່ໃນທຸກລະດັບນັບແຕ່ຂັ້ນຄອບຄົວ ຫາຂັ້ນລັດຖະບານແມ່ນ ຕ້ອງການໃຫ້ ມີການຝຶກອົບຮົມ ແລະ ຈັດຕັ້ງປະຕິບັດຍຸດທະສາດກ່ຽວ ກັບບົດບາດ ຍິງຊາຍຢ່າງຈິງຈັງ.

## ຂັ້ນກະຊວງ/ກົມ

1. ຍຸດທະສາດລະດັບຊາດຂອງການພັດທະນາການປະມົງ ແມ່ນຕ້ອງໄດ້ເອົາບັນຫາ ບົດບາດຂອງແມ່ຍິງເຂົ້າພິຈາລະນາ. ຍຸດທະສາດດັ່ງກ່າວ ແມ່ນຕ້ອງໄດ້ມີການ ປຶກສາຫາລື ກ່ອນທີ່ຈະນຳໄປຈັດຕັ້ງປະຕິບັດ.

2. ເປີດຝຶກອົບເຮົາບົດບາດຂອງແມ່ຍິງ ໃຫ້ແກ່ຜູ້ນຳຂັ້ນສູງໃນລະດັບຕັດສິນບັນຫາ. ການ ຝຶກອົບຮົມດັ່ງກ່າວຈະຊ່ວຍສ້າງຈິດສຳນຶກກ່ຽວກັບບົດບາດຍິງຊາຍ ແລະ ຊ່ວຍໃນການຮ່າງຂໍ້ແນະນຳບົດບາດຍິງຊາຍໃຫ້ແກ່ກົມກອງເຂົາເຈົ້າ ເພື່ອຈັດຕັ້ງປະຕິບັດ.

3. ຜູ້ນຳຂັ້ນລັດຖະບານຕ້ອງໄດ້ມີການຍົກບັນຫາບົດບາດຍິງຊາຍ ຂື້ນມາປຶກສາຫາລື ກັບພາກສ່ວນພາຍນອກ ກ່ຽວກັບສິດທິຂອງເພດຍິງຢ່າງເປັນລະບົບ ແລະ ຕໍ່ເນື່ອງ.

4. ວຽກງານດັ່ງກ່າວແມ່ນມີຄວາມຕ້ອງການທືນເພື່ອມາຈັດຕັ້ງປະຕິບັດ.

5. ຕ້ອງໄດ້ໃຫ້ໂອກາດແກ່ພະນັກງານກາງ ແລະ ພະນັກງານໜຸ່ມນ້ອຍເພື່ອເຂົ້າຮ່ວມຝຶກອົບຮົມ, ສ້າງຈິດສຳນຶກກ່ຽວກັບບົດບາດຍິງຊາຍ ແລະ ເພີ່ມຄວາມຮູ້ໃນການ ວິໄຈບັນ ຫາບົດບາດຍິງຊາຍ ແລະ ການສ້າງໂຄງການກ່ຽວກັບບົດບາດຍິງຊາຍ.

6. ບັນດາເງື່ອນໄຂຕ່າງໆໃນການຍົກລະດັບ ຫລື ຍ້ອງຍໍຕ້ອງໄດ້ລວມເອົາການປະກອບສ່ວນເຂົ້າໃນວຽກງານປັບປຸງຄວາມສະເໝີພາບບົດບາດຍິງຊາຍເຂົ້ານຳ.

7. ເພີ້ມຈຳນວນເພດຍິງເຂົ້າໃນກະຊວງ ແລະ ກົມກອງຕ່າງໆໂດຍສະເພາະຢູ່ໃນຂັ້ນ ຕັດສິນບັນຫາ.

**ຂັ້ນຊຸມຊົນ.**

1. ຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງເພດຍິງ ແລະ ກຸ່ມຂອງເພດຍິງເຂົ້າໃນຂະບວນການ ຕັດສິນບັນຫາ.

2. ປັບປຸງ ແລະ ອຳນວຍຄວາມສະດວກໃຫ້ແກ່ເພດຍິງ ໃນການເຂົ້າຫາຂໍ້ມູນກ່ຽວກັບການປະມົງເພື່ອໃຫ້ເຂົາເຈົ້າສາມາດປະກອບສ່ວນເຂົ້າໃນວຽກງານຕ່າງໆໄດ້.

**ວຽກງານຄົ້ນຄວ້າ.**

1. ຄົ້ນຄວ້າກ່ຽວກັບລະບົບຄຸ້ມຄອງບົດບາດຍິງຊາຍຕໍ່ການປະມົງ. ຊຶ່ງມັນຮຽກຮ້ອງ ໃຫ້ມີການພັດທະນາຕົວວັດແທກທີ່ເໝາະສົມ, ລະບົບລາຍງານ, ແລະ ມີນິຍາມ ທີ່ຈະແຈ້ງກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມ.

2. ສົ່ງເສີມການຄົ້ນຄວ້າທີ່ມີຫົວຂໍ້ບົດບາດຂອງເພດຍິງໃນການປະມົງ.

3. ພັດທະນາຕົວວັດແທກສະເພາະບົດບາດຂອງເພດຍິງໃນການປະມົງ ແລະ ລວມ ເຂົ້າໃນວຽກງານເກັບກຳຂໍ້ມູນຢ່າງເປັນລະບົບຕໍ່ເນື່ອງ.

**ຊຸກຍູ້ເຄືອຄ່າຍ**

ເຄືອຄ່າຍ NGF ຕ້ອງໄດ້ມີການຂະຫຍາຍສະມາຊິກ ແລະ ສ້າງຄວາມເຂັ້ມແຂງເພື່ອ ເຮັດໃຫ້ສາມາດເຮັດວຽກໄດ້ຢ່າງ ມີປະສິດທິຜົນໂດຍຜ່ານການຝຶກອົບຮົມ ແລະ ເຮັດກິດຈະ ກຳຕ່າງໆ.

**ບົດສັງລວມຊ້ອນທ້າຍ**:


1. Siason, I.M., Tech, E., Matics, K.I., and P.S. Choo (2000) Women in fisheries in Asia. In: Chio-Laio, N.H., K.I and N.C. Nandeesha (2002) Global Symposium on Women in Fisheries, proceedings of the symposium “Women in fisheries: Towards a global overview” 6th Asian Fisheries Forum, 29 November 2001, Kalhsiung, Taiwan.

2. ຕົວຢ່າງໜ້າທີ່ ແລະ ການປະກອບສ່ວນຂອງເພດຍິງເຂົ້າໃນວຽກງານ ປະມົງ

3. ເຄືອຄ່າຍ ຂອງເພດຍິງເພື່ອພັດທະນາການປະມົງ (NGF) ໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 1999. ເຄືອຄ່າຍ NGF ແມ່ນມີຕົວແທນຈາກປະເທດສະມາຊິກທັງສີ່ປະເທດ. ຈຸດປະສົງ

ຂອງເຄືອຄ່າຍແມ່ນເພື່ອຍົກບັນຫາ ແລະ ສົ່ງເສີມບົດບາດຍິງຊາຍໃນການປະມົງໂດຍຜ່ານ ການຝຶກອົບຮົມ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ເຜີຍແຜ່ຂໍ້ມູນຂ່າວສານ.

*(i) ການປະກອບສ່ວນຂອງເພດຍິງ ເຂົ້າໃນວຽກງານການຫາປາ ແລະ ລ້ຽງປາຢູ່ເຂດລຸ່ມ ຂອງແມ່ ນ້ຳສົງຄາມ, ປະເທດໄທ.*




ແຫລ່ງຂໍ້ມູນ Kusakabe (in press) see end note 4




ແຫລ່ງຂໍ້ມູນ Kusakabe (in press) see end note 4

*(ii) ການປະກອບສ່ວນຂອງເພດຍິງ ແລະ ຊາຍ ໃນການປະມົງ ຢູ່ແຂວງ Tra Vinh, ຫວຽດນາມ*




ແຫລ່ງຂໍ້ມູນ Kusakabe (in press) see end note 4

4. Kusakabe, K. (in press) Gender and Fisheries in the Lower Mekong Basin. MRC ຈະພິມບົດດັ່ງກ່າວເປັນໃນຮູບແບບ ຂອງບົດເຕັກນິກ ການພັດທະນາຢູ່ ອ່າງແມ່ນ້ຳຂອງ ໃນໄວໆນີ້.

5. ຈຳນວນນັກຮຽນໃນສະຖາບັນການປະມົງ, ມະຫາວິທະຍາໄລກະເສດສາດ, ປະເທດໄທ.

| ວິຊາຮຽນ | ລວມທັງຫມົດ | ຊາຍ | ຍິງ | %ເພດຍິງ |
|---|---|---|---|---|
| ຄຸ້ມຄອງການປະມົງ | 157 | 91 | 66 | 42.0 |
| ຊີວະສາດກ່ຽວກັບປາ | 140 | 45 | 95 | 67.9 |
| ການລ້ຽງປາ | 274 | 168 | 106 | 38.7 |
| ເຕັກນິກການປະມົງ | 143 | 70 | 73 | 51.0 |
| ການສຶກສາກ່ຽວກັບທະເລ | 174 | 119 | 55 | 31.6 |
| ລວມ | 888 | 493 | 395 | 44.5 |

ແຫລ່ງຂໍ້ມູນ: Suwanragsi, (ບໍ່ມີວັນທີ່) ການປ່ຽນແປງທາງດ້ານເຕັກໂນໂລຊີ ແລະ ຂໍ້ຄຶງ ຄ້າງ ຂອງເພດຍິງໃນການປະມົງ.

6. ຈຳນວນພະນັກງານຍິງຢູ່ກະຊວງ, ກົມ ຕ່າງໆ ທີ່ເຮັດວຽກກ່ຽວກັບການປະມົງຂອງ ສີ່ປະເທດ

| ລາຍລະອຽດ | ກຳປູເຈັຽ | ລາວ | ໄທ | ຫວຽດນາມ | ທົ່ວພາກພື້ນ |
|---|---|---|---|---|---|
| ພະນັກງານທັງຫມົດ | 1214 | 889 | 2725 | 161 | 4380 |
| ເພດຍິງ | 171 | 225 | 998 | 41 | 1380 |
| % ເພດຍິງ | 14.1 | 25 | 37 | 28 | 32 |

ແຫລ່ງຂໍ້ມູນ: ໄດ້ຈາກບົດສະເຫນີ ຂອງແຕ່ລະປະເທດຕໍ່ກອງປະຊຸມປະຈຳປີ ຄັ້ງທີ່ 5 ຂອງ NGF

ຫມາຍເຫດ: ຂໍ້ມູນຈາກ ກຳປູເຈັຽ, ລາວ ແລະ ໄທ ແມ່ນລວມທັງໝົດພະນັກງານຢູ່ສູນກາງ ແລະ ທ້ອງຖິ່ນ, ສະເພາະຫວຽດນາມ ແມ່ນລວມເອົາແຕ່ພະນັກງານຢູ່ສູນກາງເທົ່ານັ້ນ.

ຈຳນວນພະນັກງານຍິງຢູ່ກົມ, ກະຊວງ, ຂັ້ນວາງນະໂຍບາຍ

| ປະເທດ | ຈຳນວນພະນັກງານ | ພະນັກງານເພດຍິງ | % ເພດຍິງ |
|---|---|---|---|
| ກຳປູເຈັຽ | 134 | 8 | 6.0 (i) |
| ລາວ | 72 | 7 | 9.7 (ii) |
| ໄທ | 257 | 75 | 29.2 (iii) |
| ຫວຽດນາມ | 144 | 12 | 8.0 (iv) |

ໝາຍເຫດ: ການກຳນົດຜູ້ຕັດສິນບັນຫາແມ່ນແຕກຕ່າງກັນໃນແຕ່ລະປະເທດ, ໄທ ແມ່ນ ນັບເອົາຂັ້ນ 8-11, ຫວຽດນາມ ແມ່ນຜູ້ນຳລະດັບກະຊວງ , ກົມ ແລະ ຂັ້ນແຂວງ 26 ແຂວງ, ລາວແມ່ນຄິດໄລ່ເອົາຂັ້ນຮອງພະແນກຂອງກົມປະມົງຂຶ້ນໄປ, ກຳປູເຈັຽແມ່ນຂັ້ນຮອງພາກ ສ່ວນຂອງກົມປະມົງຂຶ້ນໄປ ແລະ ຂັ້ນຫົວໜ້າພະແນກໃນແຕ່ລະແຂວງ.

(i) ສາມ ໃນ ແປດຄົນ ແມ່ນຫົວໜ້າພາກສ່ວນ. (ii) ມີພຽງຜູ້ຍິງຄົນດຽວໃນຈຳນວນຮອງກົມ ຂຶ້ນໄປ 8 ຄົນ. (iii) ມີພຽງ 7.5 % ຂອງຈຳນວນເພດຍິງຢູ່ລະດັບຕັດສິນບັນຫາ, ສຳລັບເພດ ຊາຍແມ່ນ 10.5%. (iv) ຖ້າວ່ານັບສະເພາະຢູ່ກະຊວງປະມົງແລ້ວແມ່ນມີ 12% (ລວມທັງ ໝົດ 66, ເພດຍິງ 8).

7. ເພດຍິງ ໃນຂັ້ນຄຸ້ມຄອງ ແລະ ຕັດສິນບັນຫາແບບມີສ່ວນຮ່ວມກ່ຽວກັບສັດນ້ຳ

| | ກຳປູເຈັຽ | ລາວ | ຫວຽດນາມ |
|---|---|---|---|
| ວາງແຜນຄຸ້ມຄອງອ່າງ | 40% | 20% | 50% |
| ຂັ້ນຫົວໜ້າ | 30% | 20% | 20% |

ແຫລ່ງຂໍ້ມູນ: Sriputinibonh *et al.* (2004) Gender-mainstreaming in the MRC Fisheries Programme, presented at the 7th Asian fisheries Forum, 30th November-3rd December 2004, Penang, Malaysia.

## ບົດສະເໜີອື່ນໆ ທີ່ໄດ້ຈັດພິມ

- ວັງນ້ຳເລິກແມ່ນທີ່ຢູ່ອາໄສໃນລະດູແລ້ງ ຂອງປາແມ່ນ້ຳຂອງ
- ຊະນິດປາໃຫຍ່ໃນແມ່ນ້ຳຂອງ: ການຄຸ້ມຄອງ ແລະ ຊີວະວິທະຍາ
- ວິທີການດຳລົງຊີວິດ ແລະ ການຄຸ້ມຄອງການປະມົງ ຢູ່ອ່າງແມ່ນ້ຳຂອງຕອນລຸ່ມ
- ການເຄື່ອນຍ້າຍຂອງປາໃນອ່າງແມ່ນ້ຳຂອງຕອນລຸ່ມ


**ຈັດພິມໂດຍ ກອງເລຂາຄະນະກຳມະທິການແມ່ນ້ຳຂອງສາກົນ**

**ເພື່ອສົ່ງເສີມ ແລະ ຊຸກຍູ້ວຽກງານ TAB**



ຄະນະກຳມະທິການແມ່ນ້ຳຂອງສາກົນ

ຕູ້ ປນ: 6101, 184 ຖະໜົນຟ້າງຸ່ມ, ໜ່ວຍ 18, ບ້ານສີຖານເໜືອ

ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ

ໂທລະສັບ: (856 21) 263 263; ແຟກ: (856 21) 263 264

ອີແມວ: mrcs@mrcmekong.org; ແວບໄຊ: www.mrcmekong.org



*ແປ ແລະ ຮຽບຮຽງພາສາລາວໂດຍ: ການວິພອນ ພຸດທະວົງສ໌*

*ເມສາ 2008*